# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກໝາກຖົ່ວ

(ສະບັບທົດລອງ)



ຂຽນໂດຍ: ທ່ານ ສະຫຼອງ ແກ້ວດວງສີ
ຂໍ້ມູນຈາກ: ບ້ານ ສີມມະໂນ ເມືອງ ຫາດຊາຍຟອງ
ນະຄອນຫຼວງວຽງຈັນ

ປີ 2006

PDF created with pdfFactory Pro trial version www.pdffactory.com

# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກໝາກຖົ່ວ

ຮີບໂຮມ ແລະຈັດໜ້າໂດຍ: ທ້າວ ໂພໄຊ ດວງສະຫວັນ

ຮຽບຮຽງໂດຍ: ອ.ຈ ໂພໄຊ ຈັນທະວົງສາ

ອ.ຈ ເກດມະນີ ບັນດາສັກ

ອ.ຈ ຄຳໄຫວ ອິນທະວົງ

ອ.ຈ ລົ່ງ ແສງດາລາ

ອ.ຈ ທອງຂັນ ສີລິໂພຄຳ

ແຕ້ມໂດຍ: ທ້າວ ອູ່ທອງ ແສງນາລີ

ເຈົ້າຂອງ: ພະແນກສຶກສານະຄອນຫຼວງວຽງຈັນ ແລະ

ສູນອົບຮົມຮ່ວມພັດທະນາ

PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປື້ມພູມປັນຍາທ້ອງຖິ່ນຫົວນີ້ໄດ້ມາຈາກການຊຽນຂອງຊາວບ້ານແລະອາສາສະໝັກເຊິ່ງໄດ້ຮຽບຮຽງເບື້ອງຕົ້ນຈາກຄະນະອຳນວຍການສູນອົບຮົມຮ່ວມພັດທະນາແລະພະແນກສຶກສານະຄອນຫຼວງວຽງຈັນ

ປື້ມຫົວນ້ອຍຫົວນີ້ໄດ້ບັນຈຸເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນປະຖົມ ປໍ 1 ປໍ 2 ແລະບົດທີ່ຍາກກໍສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຫວັງຄິດວ່າປື້ມຫົວນີ້ຄົງເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກທີ່ຈະໄປສອນເດັກປະຖົມບໍ່ຫຼາຍກໍໜ້ອຍ

ຄະນະຈັດທຳຄິດວ່າຍັງມີຫຼາຍເນື້ອໃນທີ່ບໍ່ທັນພຽງພໍແລະຂາດໄປຫວັງວ່າຄົງໄດ້ຮັບການຕິຊົມຈາກທຸກທ່ານ ພວກເຮົາພ້ອມທີ່ຈະປັບປຸງຕາມຄວາມເໝາະສົມ.

**ຄະນະຈັດທຳ**

PDF created with pdfFactory Pro trial version www.pdffactory.com

## ຄວາມເປັນມາ:

ການປູກໝາກຖົ່ວໃນໄລຍະຜ່ານມາກໍແມ່ນມີມາແຕ່ເຊັ່ນພໍ່ແມ່ມາ ເພື່ອປູກເປັນອາຫານພາຍໃນຄອບຄົວແຕ່ການປູກໝາກຖົ່ວຂອງພໍ່ແມ່ ໃນເມື່ອກ່ອນແມ່ນການປູກຕາມພື້ນທີ່ໄຮ່ ຫຼືບ່ອນຈຸ້ມສຸມໄຟເປັນຈຸດ ເປັນບ່ອນ. ແນວພັນກໍແມ່ນແນວພັນໝາກຖົ່ວບົ້ງ(ຖົ່ວຫວານ) ແລະ ຖົ່ວກະດູກ(ຖົ່ວເປືອກບາງ)ແຕ່ຕົກມາຮອດໃນປະຈຸບັນການປູກໝາກ ຖົ່ວແມນປູກເປັນສິນຄ້າ ແລະປູກໝາກຖົ່ວພັນກະປ໋ອງ ຫຼືຊອງທີ່ຖືກ ຄັດເລືອກແນວພັນຈາກສູນພັນພືດ ແລະປູກຕາມວິທະຍາສາດເຕັກ ນິກ.

PDF created with pdfFactory Pro trial version www.pdffactory.com

**ອຸປະກອນ:**

ຈົກ



ຄາດ



PDF created with pdfFactory Pro trial version www.pdffactory.com

ກະກຽມຫຼັກ(ໄມ້ຄ້າງ)ຮາວ



ກະກຽມຝຸ່ນຄອກ



PDF created with pdfFactory Pro trial version www.pdffactory.com

## <u>ຂັ້ນຕອນໃນການປູກ:</u>

ໄຖຫຼືພູນດິນຕາກແດດໄວ້ 3 – 4 ວັນ ຫຼື 1 ອາທິດ ແລ້ວ ຂຶ້ນຄູໜານປູກ



ຄຸມຜ້າຢາງຄຸມຫຍ້າ ເຈາະປ່ອງຜ້າຢາງຊຸດຂຸມ ຫ່າງກັນ 30 – 40 ຊັງຕີແມັດ



PDF created with pdfFactory Pro trial version www.pdffactory.com

ລົງແກ່ນແຊ່ນ້ຳໃຫ້ໄນ່ທໍ່ໃສ່ຜ້າໝັກດິນໃຫ້ແກ່ນງອກ ຫຼືຈໍ່ໜໍ່
ແລ້ວນຳໄປປູກໃນຂຸມໜານທີ່ກຽມໄວ້.



ສຽບຫຼັກຄ້າງ. ມັດຮາວ, ໃຫ້ນ້ຳ 4 – 5 ວັນຕໍ່ຄັ້ງ



PDF created with pdfFactory Pro trial version www.pdffactory.com

ພາຍຫຼັງປູກໄດ້ໜຶ່ງເດືອນ 15 ວັນເຄືອຖົ່ວກໍຈະເລີ່ມຈໍ່ດອກ ອອກໝາກ, ອາຍຸເຕັມສອງເດືອນກໍຈະເລີ່ມເກັບໄປກິນ ຫຼື ຂາຍໄດ້



**<u>ຜົນປະໂຫຍດ:</u>**

ໝາກຖົ່ວເປັນພືດຕະກຸນທີ່ປູກງ່າຍຖ້າຫາກບໍ່ມີຜົນເສຍຫາຍຈາກສັດຕູພືດຈະສ້າງລາຍຮັບໃຫ້ແກ່ຄອບຄົວນຳລາຍໄດ້ປະຈຳວັນໃຫ້ແກ່ຄອບຄົວ. ອາຍຸການເກັບຜົນຍາວນານ.

PDF created with pdfFactory Pro trial version www.pdffactory.com

## ກາບ: ການປູກໝາກຖົ່ວ

| | |
|---|---|
| ຄົນບ້ານເຮົາ | ມັກປູກມັກຝັ່ງ |
| ມີພ້ອມທັງ | ພືດຜັກຕ່າງໆ |
| ບໍ່ໃຫ້ຫວ່າງ | ທັງແລ້ງທັງຝົນ |
| ບໍ່ກັງວົນ | ແນວພັນແກ່ນຖົ່ວ |
| ໃນຄອບຄົວ | ອອກແຮງພ້ອມພໍ່າ |
| ເຊົ້າແລະຄ່ໍາ | ພາກັນອອກແຮງ |
| ຖົ່ວອອກແໜງ | ມີແຮງໃຈຈ້າວ |
| ພາກັນຫ້າວ | ຫວັງໄດ້ຮັບຜົນ |

## ເຊີ້ງ: ໄປປູກໝາກຖົ່ວ

ໂຮ.........ໂຮ............ໂຮ...........ຮືວ *3

| | |
|---|---|
| * ເອີ້າມາເຮົາມາ | ພ້ອມກັນຟ້າວຟັ່ງ |
| ຢ່າມົວແຕ່ນັ່ງ | ລົມກັນແລ້ວຫົວ |
| ມາໄປປູກຖົ່ວ | ໄວ້ເປັນອາຫານ |
| ລະດົມລູກຫຼານ | ພາກັນໄປປູກ |
| ຮີບໄປພວກລູກ | ໄປປູກພ້ອມກັນ |
| ຖົ່ວມັນສໍາຄັນ | ອາຫານແຊບຊ້ອຍ |
| ມາຊອຍໃສ່ກ້ອຍ | ກັບລາບແຊບດີ |
| ຖົ່ວນີ້ມັນມີ | ໂປຼຕີນສູງສິ່ງ |
| ຖ້າຖົ່ວມັນບົ່ງ | ຈໍດອກອອກແໜງ |
| ເບິ່ງແລ້ວມີແຮງ | ປອດໃຈຈ້າວໆ |

PDF created with pdfFactory Pro trial version www.pdffactory.com

# ເພງ: ປູກຖົ່ວ

* ສວນຖົ່ວບ້ານເຮົາ
ຍ້ອນວ່າເຮົາມີ
ປູກໃສກໍໄດ້
ປູກແລ້ວໄດ້ກິນ
ປູກ......
ປູກໃຫ້ໄດ້ຂາຍ
ປູກບໍ່ໃຫ້ຂາດ
ເຮັດໃຫ້ເຮົາມີ
ໄປຂາຍໄດ້
ເອົາໄປຊື້ເສື້ອຜ້າ
ປວດຈ້າວໆ
ຮີບມາພາກັນໄປ

ປູກແລ້ວມັນງາມອີ່ຫຼີ່
ວິທີປູກໃໝ່
ບໍ່ໄດ້ເລືອກດິນ (ຊ້ຳ)
ເຫຼືອກິນເອົາໄປຂາຍ
ໃຫ້ໄດ້ຫຼາຍໆ
ສູ່ທ້ອງຕະຫຼາດ
ຖົ່ວລາດກໍດີ (ຊ້ຳ)
ເງິນທອງມາກມາຍ
ເງິນຄຳກໍຄືວ່າ
ມາໄວ້ນຸ່ງໜາວ
ຟ້າວຟັ່ງໄວ້ໆ
ປູກຖົ່ວໄວ້ລະວັນນີ້

PDF created with pdfFactory Pro trial version www.pdffactory.com

# ລຳ: ວິທີປູກຖົ່ວ

ໂອ...ໂອ່ລະນໍຫຼ້າເອີ່ຍງາມແທ້

ປົ່ວລົ່ວເອີຍ
ແກ້ມນ້ອງປົ່ວລົ່ວ
ລົງໄປເບິ່ງສວນຖົ່ວ
ອົ້ວຕົ້ວຂຽວງາມ
ໃຜກໍແລ່ນມາຖາມ
ເຮັດຈັ່ງໃດອ້າຍປູກ
ຈັ່ງແມ່ນມັນເກີດລູກ
ເປັນໝາກຂຽວງາມ
ຂ້ອຍເລີຍຕອບຄຳຖາມ
ວ່າມັນບໍ່ຍາກດອກ
ວ່າແຕ່ພ້ອມກັນຕອກ
ຂຶ້ນຄອກຂຶ້ນຄູ
ແລ້ວເອົາຜ້າຢາງປູ
ເຈາະຮູພ້ອມພ່ຳ
ແລ້ວກໍພ້ອມກັນນ່ຳ
ລົງແກ່ນລົງໃນ
ຈາກນັ້ນກໍພ້ອມກັນໄປ
ຕັດຫຼັກມາສຽບ
ມັດຮາວໃສ່ລຽບໆ
ສຽບໆແທງໆ
ບໍ່ພໍດົນຖົ່ວມັນກໍອອກແໜງ
ມີແຮງຍ່າວໆ
ໂຈະບົດບັ້ນ
ກອນລຳໄວ້ກ່ອນ
ຂໍຕໍ່ກອນເທື່ອໜ້າ
ຍັງກວ້າງກວ່າແຕ່ຫຼັງ
ແຕ່ຫຼັງ
ໂອຍຍັງກວ້າງກວ່າແຕ່ຫຼັງ
ສິລົງຂັງ
ມ້ວນໆໄວ້ກ່ອນໆທໍ່ນັ້ນແລ້ວ

PDF created with pdfFactory Pro trial version www.pdffactory.com

# ຮູບ ແລະປະຫວັດຂອງຜູ້ຂຽນ



**ຊື່:** ທ່ານ ສະຫຼອງ **ນາມສະກຸນ:** ແກ້ວດວງສີ

**ອາຍຸ:** 50 ປີ **ອາຊີບ:** ນາຍບ້ານສີມມະໂນ

## ເຫດຜົນຂອງການຂຽນປື້ມຫົວນີ້:

ເພື່ອຢາກໃຫ້ລູກຫຼານເຮົາສືບຕໍ່ພູມປັນຍາທ້ອງຖິ່ນຂອງປູ່ຍ່າຕາຍາຍທີ່ເພິ່ນພາກັນເຮັດມາຫຼາຍປີແລ້ວ ແລະໄປນຳໃຊ້ໃຫ້ເປັນປະໂຫຍດຕໍ່ໆກັນໄປ.

PDF created with pdfFactory Pro trial version www.pdffactory.com